ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 404/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 11-3-2019

ເລກທີ 0529
ວັນທີ 13/3/19

ເລກທີ 0804
ວັນທີ 15-3-19

# ແຈ້ງການ

ຮຽນ: - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ນັບຖື.

- ທ່ານ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.
- ທ່ານ ລັດຖະມົນຕີກະຊວງຍຸຕິທຳ.
- ທ່ານ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ.
- ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.
- ທ່ານ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່.
- ທ່ານ ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.
- ທ່ານ ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.
- ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ.
- ທ່ານ ຜູ້ວ່າທະນາຄານ ແຫ່ງ ສປປ ລາວ.

ເລື່ອງ : ທິດຊີ້ນຳ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018.

- ອີງຕາມ ການລາຍງານຂອງບັນດາກະຊວງກ່ຽວຂ້ອງ ຕໍ່ກອງປະຊຸມລັດຖະບານສະໄໝສາມັນ ຄັ້ງວັນທີ 20 ກຸມພາ 2019;
- ອີງຕາມ ຜົນກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນກຸມພາ 2019 ຄັ້ງວັນທີ 19-20 ກຸມພາ 2019;

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຂໍຖືເປັນກຽດແຈ້ງ ຜົນຂອງກອງປະຊຸມລັດຖະບານ ມາຍັງທ່ານ ຊາບ ດັ່ງນີ້:

1. ຕົວຊີ້ວັດທີ 01 ການເລີ່ມຕົ້ນທຸລະກິດ: ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຮີບຮ້ອນຈັດຕັ້ງປະຕິບັດການຂຶ້ນທະບຽນວິສາຫະກິດແບບໃໝ່ຕາມຂໍ້ຕົກລົງ, ສະບັບເລກທີ 0023/ອຄ.ກທຄວ, ລົງວັນທີ 09 ມັງກອນ 2019, ວ່າດ້ວຍການຂຶ້ນທະບຽນວິສາຫະກິດ ໃຫ້ປະກົດຜົນເປັນຈິງ, ຮັບປະກັນການຂຶ້ນທະບຽນວິສາຫະກິດ ໃຫ້ມີຄວາມສະດວກງ່າຍດາຍທີ່ສຸດ, ວ່ອງໄວທີ່ສຸດ ແລະ ມີຄ່າໃຊ້ຈ່າຍໜ້ອຍທີ່ສຸດ. ໃຫ້ກະຊວງການເງິນ ລົບລ້າງບໍ່ໃຫ້ມີການຈົດທະບຽນກົດລະບຽບພາຍໃນຂອງບໍລິສັດ. ນອກຈາກນັ້ນ, ໃຫ້ພິຈາລະນາການຂຶ້ນທະບຽນວິສາຫະກິດແບບເອເລັກໂຕຣນິກ ແລະ ເຊື່ອມຕໍ່ກັນລະຫວ່າງລະບົບຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກົມປະກັນສັງຄົມ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.



Scanned with CamScanner

2. ຕົວຊີ້ວັດທີ 02 ການຂໍອະນຸຍາດກໍ່ສ້າງ: ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ປະສານສົມທົບກັບພາກສ່ວນ ກ່ຽວຂ້ອງໃນການຕິດຕາມກວດກາ ເພື່ອຮັບປະກັນການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການຄຸ້ມ ຄອງການປຸກສ້າງ, ສະບັບເລກທີ 2241/ຍທຂ, ລົງວັນທີ 31 ມັງກອນ 2019 ໃຫ້ໄດ້ຮັບຜົນດີ ໂດຍສະເພາະຂັ້ນຕອນການປະກອບເອກະສານ, ໄລຍະເວລາການອະນຸມັດ, ໃບສະແດງຄ່າທຳນຽມ ແລະ ໃບຄຳຮ້ອງທີ່ບໍ່ມີຄ່າໃຊ້ຈ່າຍຕ່າງໆ ແລະ ເຜີຍແຜ່ລະບຽບການປຸກສ້າງໃນທົ່ວປະເທດໃຫ້ສຳເລັດ ແລະ ມີປະສິດທິຜົນ. ໃນໄລຍະກາງເຖິງໄລຍະຍາວ, ໃຫ້ພັດທະນາວິທີການຄຸ້ມຄອງຕາມຄວາມສ່ຽງຂອງຂັ້ນຕອນການຂໍອະນຸຍາດ, ການກວດກາ ແລະ ການຮັບຮອງເອົາການແບ່ງເຂດແດນຢ່າງລະອຽດ, ແຜນການນຳໃຊ້ທີ່ດິນ ແລະ ລະບຽບການກໍ່ສ້າງແຫ່ງຊາດ. ໃຫ້ຈັດຕັ້ງລະບົບຢັ້ງຢືນດ້ານການປະກອບວິຊາຊີບ ສຳລັບນັກສະຖາປະນິກ ແລະ ນັກວິສາວະກອນຢ່າງເປັນທາງການ.

3. ຕົວຊີ້ວັດທີ 03 ການຕິດຕັ້ງໄຟຟ້າ: ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການປະສານສົມທົບກັບລັດວິສະຫະກິດໄຟຟ້າລາວ ແລະ ພາກສ່ວນກ່ຽວຂ້ອງໃນການຕິດຕາມກວດກາ ເພື່ອຮັບປະກັນການຈັດຕັ້ງປະຕິບັດຂໍ້ກຳນົດວ່າດ້ວຍການປັບປຸງຂັ້ນຕອນການບໍລິການຕິດຕັ້ງໝໍ້ນັບໄຟ, ການກໍ່ສ້າງຕາຂ່າຍໄຟຟ້າ ແລະ ຕິດຕັ້ງໝໍ້ແປງໄຟຟ້າ, ສະບັບເລກທີ 3578/ຟຟລ, ລົງວັນທີ 07 ກັນຍາ 2018. ເພີ່ມປະສິດທິພາບໃນການຈັດຕັ້ງປະຕິບັດສູນບໍລິການສ້ອມແປງໄຟຟ້າສຸກເສີນ, ສູນສາຍດ່ວນ 1199 (Call Center), ໂຄງການ Smart meter (ໝໍ້ນັບໄຟແບບທັນສະໄໝ), ລະບົບ SCADA (ແຈ້ງເຕືອນເວລາໄຟຕົກ-ໄຟມອດ) ໃຫ້ໄດ້ຮັບຜົນດີ. ພ້ອມດຽວກັນນັ້ນ, ໃຫ້ຄົ້ນຄວ້າຫຼຸດຂັ້ນຕອນໃນການຂໍອະນຸຍາດຕິດຕັ້ງໄຟຟ້າຈາກ 07 ຂັ້ນຕອນມາເປັນ 03 ຂັ້ນຕອນ, ປັບປຸງຄູ່ມືການນຳໃຊ້ໃຫ້ລະອຽດ ແລະ ເຂົ້າໃຈງ່າຍ, ແລະ ເພີ່ມຄວາມໂປ່ງໃສ ດ້ານຂັ້ນຕອນການຂໍອະນຸຍາດຕິດຕັ້ງໄຟຟ້າ, ໃບສະແດງຄ່າທຳນຽມຂອງຂັ້ນຕອນ ເຊື່ອມຕໍ່ສາຍສົ່ງໄຟຟ້າໂດຍສະເພາະແມ່ນສຳລັບຜູ້ຊົມໃຊ້ ເພື່ອທຸລະກິດ.

4. ຕົວຊີ້ວັດທີ 04 ການຂຶ້ນທະບຽນຊັບສິນ: ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ຕິດຕາມການຈັດຕັ້ງປະຕິບັດຂໍ້ຕົກລົງ ມາດຖານດ້ານການບໍລິການກ່ຽວກັບ ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ, ສະບັບເລກທີ 6580/ກຊສ, ລົງວັນທີ 15 ກັນຍາ 2014 ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ໃນໄລຍະກາງ ຫາ ໄລຍະຍາວ ຕ້ອງຄົ້ນຄວ້າປັບປຸງຕື່ມກ່ຽວກັບຄຸນນະພາບຂອງການຄຸ້ມຄອງທີ່ດິນ ໂດຍສະເພາະແມ່ນການບັນທຶກໃບຕາດິນ ແບບດິຈິຕອນລວມເຖິງການເພີ່ມຄວາມໂປ່ງໃສຂອງຂໍ້ມູນທີ່ດິນ.

5. ຕົວຊີ້ວັດທີ 05 ການເຂົ້າເຖິງສິນເຊື່ອ: ໃຫ້ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂອງ ໂດຍສະເພາະກະຊວງຍຸຕິທຳໃນການປັບປຸງເນື້ອໃນນິຕິກຳກ່ຽວກັບການຄໍ້າປະກັນທີ່ນອນຢູ່ໃນຮ່າງປະມວນກົດໝາຍແພ່ງ, ກົດໝາຍ ວ່າດ້ວຍການຄໍ້າປະກັນການປະຕິບັດສັນຍາ, ກົດໝາຍ ວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ. ຮີບຮ້ອນຮ່າງດຳລັດ ວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ແລ້ວສະເໜີໃຫ້ລັດຖະບານຮັບຮອງ ແລະ ປະກາດນຳໃຊ້ໃນໄຕມາດ 04 ປີ 2019. ນອກຈາກນີ້, ໃຫ້ປັບປຸງນິຕິກຳກ່ຽວກັບການຄໍ້າປະກັນ ການປະຕິບັດສັນຍາທີ່ມີຢູ່ໃຫ້ສອດຄ່ອງ, ດ້ານຂໍ້ມູນສິນເຊື່ອ ໃຫ້ປະສານກັບຂະແໜງການກ່ຽວຂ້ອງ ກ່ຽວກັບຂໍ້ມູນສາທາລະນູປະໂພກ (Utility Payments) ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການປ່ອຍສິນເຊື່ອໃຫ້ໄດ້ຫຼາຍຂຶ້ນ.

6. ຕົວຊີ້ວັດທີ 06 ການປົກປ້ອງຜູ້ລົງທຶນລາຍຍ່ອຍ: ໃຫ້ຮີບຮ້ອນປັບປຸງກົດໝາຍ ວ່າດ້ວຍວິສາຫະກິດຕາມການສະເໜີ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ, ທະນາຄານ ສປປ ລາວ. ໂດຍມອບໃຫ້ກະຊວງອຸສາຫະກຳ ແລະ ການຄ້າ ເປັນເຈົ້າການໃນການປັບປຸງກົດໝາຍ ວ່າດ້ວຍວິສາຫະກິດ. ນອກຈາກນັ້ນ, ໃຫ້ຄະນະກຳມະການຄຸ້ມຄອງຫຼັກຊັບ ສົມທົບກັບພາກສ່ວນກ່ຽວຂ້ອງໃນການປັບປຸງກົດໝາຍ ວ່າດ້ວຍການດຳເນີນຄະດີແພ່ງ ແລະ



Scanned with CamScanner

ກົດໝາຍ ວ່າດ້ວຍຄ່າທຳນຽມສານ. ສຳລັບນິຕິກຳເບື້ອງຫຼັກຊັບ, ໃຫ້ຮີບຮ້ອນສ້າງບົດແນະນຳກ່ຽວກັບການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ, ປັບປຸງລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ, ປັບປຸງຂໍ້ຕົກລົງວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ, ປັບປຸງຄຳແນະນຳ ວ່າດ້ວຍການຈັດກອງປະຊຸມຜູ້ຖືຮຸ້ນ ແລະ ປັບປຸງກົດໝາຍວ່າດ້ວຍຫຼັກຊັບ ໃຫ້ໄດ້ຮັບການຮັບຮອງພາຍໃນ ປີ 2019.

7. ຕົວຊີ້ວັດທີ 07 ການຊຳລະອາກອນ: ໃຫ້ກະຊວງການເງິນ ຄົ້ນຄວ້າປັບປຸງກົນໄກ ການຊຳລະສະເພາະອາກອນກຳໄລຈາກ 04 ຄັ້ງ/ປີ ໃຫ້ຍັງເຫຼືອ 01 ຄັ້ງ/ປີ ໂດຍເອົາເນື້ອໃນດັ່ງກ່າວເຂົ້າໃນວາລະປັບປຸງກົດໝາຍ ວ່າດ້ວຍສ່ວຍສາອາກອນທີ່ພວມດຳເນີນການປັບປຸງ ໃນນີ້ໃຫ້ກຳນົດອອກເປັນ 02 ໄລຍະຄື:

- ໄລຍະກາງ: ພິຈາລະນາສະເໜີລະບົບການແຈ້ງອາກອນ ແລະ ການຊຳລະເງິນອາກອນ ໃນຮູບແບບອີເລັກໂຕນິກສຳລັບວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ພ້ອມທັງທົບທວນຄືນເງື່ອນໄຂ ການຂໍຄືນອາກອນມູນຄ່າເພີ່ມເພື່ອຫຼຸດໄລຍະເວລາ ໃນການກະກຽມປະກອບເອກະສານໃນການແຈ້ງ ແລະ ຂໍຄືນອາກອນ;

- ໄລຍະຍາວ: ຄວນມີການຂະຫຍາຍຂອບເຂດການສົ່ງຄືນອາກອນມູນຄ່າເພີ່ມໃຫ້ແກ່ຜູ້ປະກອບການພາຍໃນ ແລະ ຍົກລະດັບດັດສະນີຂັ້ນຕອນຫຼັງການຍື່ນໃບແຈ້ງເສຍອາກອນ ໂດຍດຳເນີນການກວດສອບ ແລະ ການສົ່ງຄືນເງິນອາກອນທີ່ມີ.

8. ຕົວຊີ້ວັດທີ 08 ການຄ້າລະຫວ່າງປະເທດ: ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການສົມທົບກັບກະຊວງການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ພາກສ່ວນກ່ຽວຂ້ອງສືບຕໍ່ຫຼຸດຂັ້ນຕອນ, ເວລາ ແລະ ເອກະສານທີ່ບໍ່ຈຳເປັນໃນການອອກອະນຸຍາດນຳເຂົ້າ ແລະ ສົ່ງອອກສິນຄ້າ. ປະສານກັບກົມພາສີ, ກະຊວງການເງິນ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງປະຈຳດ່ານ ເພື່ອຄົ້ນຄວ້າປັບປຸງຂັ້ນຕອນດຳເນີນການແຈ້ງເອກະສານນຳເຂົ້າ ແລະ ສົ່ງອອກທີ່ດ່ານຊາຍແດນ. ພ້ອມກັນນີ້, ໃຫ້ລົບລ້າງຈຸດກວດຕາມເສັ້ນທາງທີ່ບໍ່ຈຳເປັນ.

9. ຕົວຊີ້ວັດທີ 09 ການບັງຄັບໃຊ້ສັນຍາ ແລະ ຕົວຊີ້ວັດທີ 10 ການແກ້ໄຂບັນຫາການລົ້ມລະລາຍ: ໃຫ້ກະຊວງຍຸຕິທຳ ແລະ ອົງການຕຸລາການປະສານສົມທົບກັບຂະແໜງການກ່ຽວຂ້ອງ ແລະ ຊຸກຍູ້, ຕິດຕາມການປັບປຸງບັນດາກົດໝາຍທີ່ກ່ຽວຂ້ອງ ໂດຍເນັ້ນໄລຍະກາງ: ຕ້ອງແນໃສ່ການປະຕິບັດທີ່ສາມາດຕັດຮອນຂອດຂັ້ນ ຂອງການດຳເນີນຄະດີການຄ້າ ໂດຍສະເພາະແມ່ນໄລຍະດຳເນີນຄະດີ ແລະ ການບັງຄັບໃຊ້ຄຳຕັດສີນຂອງສານ. ນຳໃຊ້ວິທີການບໍລິຫານຄະດີແບບມີປະສິດທິພາບ ແລະ ສ້າງລະບົບສານອັດຕະໂນມັດ ທີ່ສາມາດຮັບປະກັນການດຳເນີນຄະດີໃຊ້ເວລາສັ້ນລົງ ແລະ ຄະດີໄດ້ຮັບການແກ້ໄຂໄວຂຶ້ນ.

10. ສຳລັບຕົວຊີ້ວັດທີ 10: ໃຫ້ຮີບຮ້ອນຄົ້ນຄວ້າຮ່າງກົດໝາຍ ວ່າດ້ວຍການລົ້ມລະລາຍຂອງວິສາຫະກິດສະບັບປັບປຸງ (ທາງອົງການການເງິນສາກົນພວມໃຫ້ການຊ່ວຍເຫຼືອ ໂດຍສົມທຽບກັບການຈັດຕັ້ງປະຕິບັດຢູ່ສາກົນ) ແລ້ວສະເໜີລັດຖະບານພິຈາລະນາໃນ ປີ 2019. ນອກນັ້ນ, ຕ້ອງເພີ່ມຄວາມອາດສາມາດ ໃຫ້ພາກລັດ (ສານປະຊາຊົນ ແລະ ຜູ້ພິພາກສາ) ແລະ ພາກເອກະຊົນ (ນັກກົດໝາຍ ແລະ ຜູ້ຊ່ຽວຊານດ້ານການລົ້ມລະລາຍ) ໃຫ້ສາມາດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການລົ້ມລະລາຍຂອງວິສາຫະກິດ.

11. ໃຫ້ຂະແໜງການຫຼັກ ທີ່ຮັບຜິດຊອບປັບປຸງແຕ່ລະຕົວຊີ້ວັດປັບປຸງແຜນດຳເນີນງານ ຂອງຕົນຄືນໃຫ້ສຳເລັດພາຍໃນ 01 ເດືອນ ໂດຍຄົ້ນຄວ້າໃຫ້ເຫັນບັນຫາ ແລະ ສະເໜີວິທີການແກ້ໄຂຕິດພັນກັບຂະແໜງການໃດ ແລະ ນິຕິກຳຈຸດໃດ, ພ້ອມທັງຈັດລຽງບຸລິມະສິດ ເປັນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຕ້ອງ ລະບຸວັນເວລາທີ່ຄາດວ່າຈະສຳເລັດຢ່າງຊັດເຈນ ເພື່ອຮັບປະກັນຄວາມເປັນເອກະພາບ ແລະ ສະດວກໃນການສັງລວມ, ພ້ອມທັງເປັນເຈົ້າການຄົ້ນຄວ້າ ແລະ ປະສານກັບໜ່ວຍງານສະໜັບສະໜູນ (ໜ່ວຍງານຍ່ອຍທີ່ຕິດພັນກັບຕົວຊີ້ວັດ) ທີ່ເຫັນວ່າຕິດພັນກັບການປັບປຸງຕົວຊີ້ວັດ ທີ່ຂະແໜງຕົນຮັບຜິດຊອບ. ພ້ອມນັ້ນໜ່ວຍງານສະໜັບສະໜູນ ຕ້ອງໃຫ້



Scanned with CamScanner

ການຮ່ວມມືຢ່າງຈິງຈັງ ໃນການປັບປຸງຕາມການສະເໜີຂອງຂະແໜງການຫຼັກ ໂດຍມີການປຶກສາຫາລືກັນຢ່າງສົມເຫດສົມຜົນ.

12. ໃຫ້ບັນດາບັນດາກະຊວງ-ອົງການທີ່ກ່ຽວຂ້ອງຊີ້ນຳ ໂດຍກົງໃນການປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ທີ່ກົດໜ່ວງຖ່ວງດຶງຂັ້ນຂອດ ການໃຫ້ບໍລິການ ໂດຍໃຫ້ຍຶດຖືເອົາຄວາມຮັບຜິດຊອບຕໍ່ຜົນການຈັດຕັ້ງປະຕິບັດ ໜ້າທີ່ວຽກງານ ແລະ ໃຫ້ຂະແໜງການກວດກາ ຂອງບັນດາກະຊວງ ເຮັດໜ້າທີ່ຕິດຕາມກວດກາສຳຫຼວດການຈັດຕັ້ງປະຕິບັດໜ້າທີ່ຂອງພະນັກງານ, ຂອດຂັ້ນທີ່ເຮັດໃຫ້ມີຄວາມຊັກຊ້າ ເພື່ອບຸກທະລຸດ້ານບຸກຄະລາກອນຈັດຕັ້ງ ປະຕິບັດແຜນ ດັ່ງກ່າວ ໃຫ້ສຳເລັດ ແລະ ມີປະສິດທິຜົນສູງສຸດຕາມແຜນທີ່ວາງໄວ້.

13. ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສັງລວມ ພ້ອມທັງຕິດຕາມການຈັດຕັ້ງປະຕິບັດຂອງຂະແໜງການກ່ຽວຂ້ອງ ແລ້ວລາຍງານຄວາມຄືບໜ້າຕໍ່ກອງປະຊຸມ ນາຍົກ-ຮອງນາຍົກລັດຖະມົນຕີ, ທຸກໆເດືອນ .

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1.ນາຍົກ-ຮອງນາຍົກລັດຖະມົນຕີ | 01 ສະບັບ |
| 2.ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3.ບັນດາກະຊວງ | 01 ສະບັບ ✓ |
| 4.ຄະນະຕາລະບັບທຳມະ | 01 ສະບັບ |
| 5.ກົມເລຂາ | 01 ສະບັບ |
| 6.ກົມຄົ້ນຄວ້າ-ສັງລວມ | 01 ສະບັບ |
| 7.ກົມກວດກາ | 01 ສະບັບ |
| 8.ສຳນວນ | 01 ສະບັບ |

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກົມເລຂາ, ພະແນກເລຂາ-2 ເບີໂທ 021214966 ກອງປະຊຸມລັດຖະບານ JK4

Scanned with CamScanner